ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ — ເລກທີ 160/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 / 02 /2011

# ຂໍ້ຕົກລົງ

## ວ່າດ້ວຍການລົງທຶນໃນຫຼັກຊັບ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14/10/1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26/12/2006;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 04/ກທຄ, ລົງວັນທີ 10/01/2011.

### ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 01. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການໃນການປ່ອຍສິນເຊື່ອ ແລະ ການລົງທຶນໃນຫຼັກຊັບ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ແນໃສ່ຈຳກັດຄວາມສ່ຽງທີ່ອາດເກີດຂຶ້ນ ຈາກການປ່ອຍສິນເຊື່ອ ແລະ ການລົງທຶນໃນຫຼັກຊັບ ຮັບປະກັນຄວາມໝັ້ນຄົງຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ.

**ມາດຕາ 02. ການປ່ອຍສິນເຊື່ອ ເພື່ອລົງທຶນໃນຫຼັກຊັບ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ບໍ່ສາມາດປ່ອຍສິນເຊື່ອທາງກົງ ແລະ ທາງອ້ອມ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ເພື່ອລົງທຶນໃນຫຼັກຊັບ.

ມາດຕາ 03. ການລົງທຶນໃນຫຼັກຊັບ

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ສາມາດລົງທຶນໃນຫຼັກຊັບໃນຕະຫຼາດຫຼັກຊັບໄດ້ ໃນອັດຕາສ່ວນບໍ່ເກີນ 15% ຂອງທຶນຊັ້ນໜຶ່ງ.

ມາດຕາ 04. ການຮັກສາສະພາບຄ່ອງ ທີ່ຕິດພັນກັບທຸລະກຳທາງດ້ານຫຼັກຊັບ

ທະນາຄານທຸລະກິດ ທີ່ຮັບເປີດບັນຊີ ເພື່ອຊຳລະສະສາງທຸລະກຳດ້ານຫຼັກຊັບ ຕ້ອງຮັກສາສະພາບຄ່ອງໃຫ້ພຽງພໍ ເພື່ອຮັບປະກັນການຊຳລະສະສາງ ໃຫ້ແກ່ທຸລະກຳດັ່ງກ່າວ.

ມາດຕາ 05. ມາດຕະການຕໍ່ຜູ້ລະເມີດ

ທະນາຄານທຸລະກິດ, ສະຖາບັນການເງິນທີ່ຮັບເງິນຝາກ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມລະບຽບການທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.

ມາດຕາ 06. ການຈັດຕັ້ງປະຕິບັດ

ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຮັບເງິນຝາກ ມີໜ້າທີ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ. ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ເປັນຜູ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

ມາດຕາ 07. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ

ຜູ້ວ່າການ

ພູເພັດ ຄຳພູນວົງ